ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສຳນັກງານນາຍົກລັດຖະມົນຕີ** ເລກທີ 047/ນຍ

ນະຄອນຫຼວງວຽງຈັນ, ວັນທີ 16-02-2009

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ນະໂຍບາຍ ແຫ່ງຊາດ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບເລກທີ 25/ສພຊ, ລົງວັນທີ 06/05/2005.
- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 27/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ການຕົກລົງ ຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ກຸມພາ 2008 ໃນວັນທີ 20-21 ກຸມພາ 2008.
- ອີງຕາມ ເອກະສານສະເໜີ ຂອງອົງການວິທະຍາດສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ສະບັບເລກທີ 056/ສນຍ-ອວຕຊດ ລົງວັນທີ 26 ມັງກອນ 2009.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:

**ມາດຕາ 1.** ຮັບຮອງ ແລະ ປະກາດໃຊ້ ນະໂຍບາຍແຫ່ງຊາດ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ ສະບັບເລກທີ 057/ອວຕຊ-ສນຍ, ລົງວັນທີ 26 ມັງກອນ 2009.

**ມາດຕາ 2.** ມອບໃຫ້ອົງການໄປສະນີ ແລະ ໂທລະຄົມແຫ່ງຊາດ ສົມທົບກັບພາກສ່ວນອື່ນໆ ທີ່ກ່ຽວຂ້ອງຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດນະໂຍບາຍແຫ່ງຊາດ, ພ້ອມກັນນັ້ນມອບໃຫ້ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ເປັນຜູ້ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງຜັນຂະຫຍາຍນະໂຍບາຍດັ່ງກ່າວ ໃຫ້ປາກົດຜົນເປັນຈິງ.

**ມາດຕາ 3.** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງວຽງຈັນ, ທົ່ວໜ່ວຍທຸລະກິດ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 4.** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນາຍົກລັດຖະມົນຕີ

**ບົວສອນ ບຸບຜາວັນ**